# ປະຊາທິປະໄຕ

ເນື້ອຮ້ອງທຳນອງ ແຕ່ງແລະ ຮ້ອງໂດຍ: ສິດດົງໂດກ

໑/ ປະຊາທິປະໄຕ ຕ້ອງເຂົ້າໃຈຄວາມໝາຍມັນ
ໂດຍສັກສິສະຕິນັ້ນ ຄົນໃນຊາດຕ້ອງເປັນໃຫຍ່
ແຕ່ປູ່ບ້ານຂ້ອຍ ບັກທຳນ້ອຍຄົນຈັງໄຮ
ມັນບອກປະຊາທິປະໄຕ ແຕ່ມີໄດ້ພຽງພັກດຽວ

໒/ ປະຊາທິປະໄຕ ຕ້ອງເຂົ້າໃຈຢ່າສັບສົນ
ບໍ່ແມ່ນຍຶດຍື້ຕົວບຸກຄົນ ນະໂຍບາຍຕ້ອງຍືດໝ່ຽວ
ເລືອກຕັ້ງຢ່າງເສລີ ບໍ່ແມ່ນເລືອກຄົນດຽວ
ປະຊາຕ້ອງມີກ່ຽວ ເລືອກນະໂຍບາຍແຕ່ລະແນວ

໓/ ຜູ່ແທນບ້ານຂ້ອຍ ກໍ່ໄປຕົບມືໃນສະພາ
ກໍ່ບ່ອນເລືອກຕັ້ງນັ້ນນ໋າ ຜູ່ສມັກ...ພັກເລືອກແລ້ວ
ສ່ວນຄົນບ້ານຂ້ອຍ ມີໜ້າທີ່ໄປເຂົ້າແຖວ
ຜົນເລືອກຕັ້ງອອກມາແລ້ວ ໄດ້ພຽງນີຕາມພັກສັ່ງ

໔/ ປະຊາ ທິ ປາຕາຍ ຄົນໄປຕາຍມິດຈີ່ລີ່
ພວກຜູ່ແທນ໒໒ປີ ກົ້ມຂາບຕົບມືຕາມພັກສັ່ງ
ຜົນທີ່ຕາມມາ ຄົນບ້ານຂ້ອຍເລີຍຊື່ນຫວັງ
ປາກບໍ່ໄດ້ໄອບໍ່ດັງ ກໍ່ເພາະ ປະຊາ ທິ ປາຕາຍ

(ເອົ້າ) ໂອຍ!!!...ເລືອກຕັ້ງຄັ້ງນີ້!...ພັກເລືອກຄົນ....ປະຊາຊົນເລືອກພັກ...
ແຕ່ກໍ່ມີພັກດຽວໃຫ້ເລືອກເດີ!...ພໍ່ແມ່ພີ່ນ້ອງເອີຍ!...
(ດົນຕີ)
(໓, ໔)

(ເອົ້າ) ໂອຍ!!!...ສູ່ນີ້ນີ້...ເຈົ້າຄືຊິໄດ້ເປັນຜູ້ແທນຂອງຊາດແທ້ນໍ!?!?...
ທ່ານຜູ່ແທນໃຈດີເອີຍ!?!?....